# <u>ສອງຝັ່ງຂອງ</u>

໑- ສາຍນະທີ ລິນຫຼັ່ງຈາກຟ້າ
ແບ່ງພະສຸທາ ເປັນຊ້າຍແລະຂວາສອງຝັ່ງ
ແຕ່ນ້ຳກັ້ນຂວາງ ກໍບໍ່ສຳຄັນ
ດ້ວຍຄວາມສຳພັນ ຂອງເຮົາໝັ້ນຄົງເລື້ອຍມາ ...

໒- ເຖິງໄກກັນ ຄົນລະຝັ່ງຂອງ
ຕ່າງໝາຍປອງດອງ ໝຸ່ງຫວັງທັງສອງຈົນໄດ້
ດ້ວຍຄວາມໃຝ່ຝັນ ໝັ້ນສຸດຫົວໃຈ
ປັກຝັງຊວງໃນ ເໝືອນໃຈດຽວກັນ .

*/ *ທັງສອງຝັ່ງ ກັ້ນກາງດ້ວຍສາຍນະທີ*
*ແຕ່ປະເພນີ ນັ້ນບໍ່ຕ່າງກັນ*
*ຊາດລາວແລະໄທ ກ່ອນນັ້ນເຄີຍໄດ້ສຳພັນ*
*ຮ່ວມສາຍ ໂລຫິດດຽວກັນ*
*ພຽງນ້ຳເທົ່ານັ້ນ ມາກັ້ນແບ່ງກາງ ...*

໓- ຂໍຟ້າດິນ ຊ່ວຍເປັນສັກຂີ
ໂປຣດຄິດປຣານີ ຈົ່ງຢ່າໄດ້ມີວັນຫ່າງ
ຢ່າໃຫ້ສຳພັນ ນັ້ນຕ້ອງຈືດຈາງ
ຝາກຝັງຊີວີ ເໝືອນນະທີສອງຝັ່ງເອີຍ .